# ຊາພູສັນ
# ເມືອງແປກ ແຂວງຊຽງຂວາງ



2020

## ຄຳແນະນຳ

ຊາມີຄວາມສຳຄັນຫລາຍດ້ານຕໍ່ຮ່າງກາຍ, ປະຊາຊົນໄດ້ຮູ້ຈັກຊາ ມາຫຼາຍກວ່າພັນປີແລ້ວ. ຊາແມ່ນສ່ວນຫນຶ່ງທີ່ເປັນວັດທະນະທຳໃນບັນດາປະເທດຕ່າງໆ ເພາະມີຄຸນປະໂຫຍດໃນ ການປິ່ນປົວສຸຂະພາບຮ່າງກາຍໃຫ້ແຂງແຮງ ໂດຍສະເພາະແມ່ນເມື່ອເວລາດື່ມຊາຈະຊ່ວຍໃນການດູດຊຶມ ເຮັດໃຫ້ຈິດໃຈມີຄວາມສະຫງົບ, ມີສະຕິ ສາມາດປັບປຸງຄວາມຊົງຈຳໃຫ້ດີຂຶ້ນ. ສາມາດຫຼຸດຜ່ອນຄວາມສ່ຽງຕໍ່ການເປັນພະຍາດຫົວໃຈ ແລະ ຊ່ວຍໃນການຍ່ອຍອາຫານ ແລະ ສາມາດຊ່ວຍລົດກິ່ນປາກ.

## ການຄຸ້ມຄອງອະນຸລັກ ຊາພູສັນ

- ເພື່ອເປັນການຄຸ້ມຄອງ ອະນຸລັກຮັກສາ ຊາປ່າ ຕົ້ນໃຫຍ່ພູສັນ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໄດ້ມີການຈັດສັນວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ແບບມີສ່ວນຮ່ວມ (FALUPAM) ໃນເຂດທີ່ມີ ປ່າຊາ ແລະ ພ້ອມກັນນັ້ນ ກໍ່ໄດ້ມີການສຳຫລວດ ຂຶ້ນທະບຽນຕົ້ນຊາ ສຳເລັດ ຈຳນວນ 2,313 ຕົ້ນ.
- ສະຫນັບສະຫນູນສິ່ງເສີມໃຫ້ຊາວບ້ານປູກຊາເສີມຢູ່ກ້ອງປ່າຊາຈຳນວນ 143 ຄອບຄົວ ຢູ່ 4 ບ້ານ (ອໍອັ້ນ, ເມືອງນ້ອຍ, ບ້ານຕ້າ ແລະ ບ້ານຊ້ອນ) ເມືອງແປກ ໃນເນື້ອທີ່ 335 ເຮັກຕາ 1,029,100 ຕົ້ນ.

## ຜົນຜະລິດຊາພູສັນ

- ຊາປ່າພູສັນ ແມ່ນນອນຢູໃນຂອບເຂດ ການຄຸ້ມຄອງຂອງ 4 ບ້ານຄື: ບ້ານອໍອັ້ນ, ບ້ານເມືອງນ້ອຍ, ບ້ານຕ້າ ແລະ ບ້ານຊ້ອນ ຈຳນວນ 143 ຄອບຄົວ,ໃນປີ2019 ສາມາດເກັບກູ້ຊາໄດ້ທັງໝົດ 147 ໂຕນ,ໃນນີ້ເກັບກູ້ຢູ່ໃນສວນປູກແມ່ນ 114ໂຕນ ແລະ ເກັບກູ້ຈາກປ່າແມ່ນ 33 ໂຕນ,ສ້ າງລາຍຮັບໄດ້ 3,689,710,000 ກີບ, ສະເລ່ຍແມ່ນ 25,800,000ກີບ/ປີ/ຄອບຄົວ
- ລະດູການເກັບຊາ ແມ່ນເດືອນ ມີນາ (3) ຫາເດືອນ ກັນຍາ (9) ຂອງທຸກໆປີ.








## ຕ່ອງໂສ້ການຕະຫຼາດ

- ເກັບໃບຊາສົດຈາກສວນ ຫລືຈາກປ່າສົ່ງໃຫ້ຜູ້ທີ່ມີໂຮງງານຂົ້ວຊາ ທີ່ຢູ່ໃກ້ກັບບ້ານຂອງຕົນເອງ.
- **ຜູ້ຈຳໜ່າຍ:** ພໍ່ຄ້າ ຫຼື ໂຮງງານ ໄດ້ປຸງແຕ່ງຫຸ້ມຫໍ່ຜະລິດຕະພັນຊາ ສົ່ງໃຫ້ແກ່ລູກຄ້າປະຈຳ ຫຼື ນັກທ່ອງທ່ຽວ. ໂດຍທົ່ວໄປ ຈະສົ່ງຜະລິດຕະພັນ ອອກຂາຍທີ່ວຽງຈັນ ຫຼື ສົ່ງອອກຈຳຫນ່າຍທີ່ປະເທດຈີນ ຫຼື ຕະຫຼາດປະເທດໃກ້ຄຽງ.

## ລາຄາ ຊາ ພູສັນ

- ໃບຊາສົດ,ຊາທີ່ເກັບຈາກສວນປູກ ຈະຂາຍໃນລາຄາ 20,000-25,000ກີບ/ກິໂລ, ຊາທີ່ເກັບຈາກຊາປ່າ ລາຄາ  3,0000 ກີບ-35,000 ກີບຕໍ່ກິໂລ.
- ຊາແຫ້ງ,ຊາທີ່ເກັບຈາກສວນປູກ ແມ່ນລາຄາ 150,000 ກີບ/ກິໂລ ແລະ ລາຄາ 250,000 ກີບ / ກິໂລແມ່ນຊາທີ່ເກັບຈາກປາທຳມະຊາດ











## ໂອກາດການຜະລິດ

- ມີຄວາມເໝາະສົມສະພາບອາກາດ,ດິນ ແລະ ເປັນພືດເຂດເນີນສູງ
- ຕະຫຼາດຊາມີຄວາມສົນໃຈຊາຂອງປະເທດ ລາວ ເນື່ອງຈາກເປັນແຫຼ່ງຜະລິດຊາອິນຊີ ແລະ ເປັນຊາປ່າທຳມະຊາດ.
- ໄດ້ມີການປັບປຸງຊີວິດ ການເປັນຢູ່ຂອງປະຊົນບັນດາເຜົ່າຜູ້ທີ່ທຸກຍາກທີ່ອາໃສຢູ່ເຂດພູດອຍ

